# ການເຮັດນ້ຳໝັກຈຸລິນຊີຈາກນ້ຳເຂົ້າໝ່າກັບເປືອກໄຂ່
## (ແຄລຊຽມ)

ທາດແຄລຊຽມໃນເປືອກໄຂ່ມີຄຸນນະພາບດີທີ່ສຸດ ເຊິ່ງປະໂຫຍດຕໍ່ການລ້ຽງໝູຄືຊ່ວຍໃນການເສີມສ້າງໂຄງສ້າງຂອງໝູ ບຳລຸງກະດູກ ແລະ ແຂ້ວໃຫ້ມີຄວາມແຂງແຮງ, ໃຊ້ກັບພືດຊ່ວຍໃຫ້ການຈະເລີນເຕີບໂຕເປັນໄປຢ່າງປົກກະຕິ ແລະ ຊ່ວຍສະສົມທາດອາຫານໃນພືດ. ແຕ່ທາດແຄລຊຽມໃນໄຂ່ບໍ່ສາມາດນຳໄປໃຊ້ໄດ້ທັນທີ ຕ້ອງເຮັດໃຫ້ຢູ່ໃນຮູບຂອງສານລະລາຍກ່ອນ.

### ວັດສະດຸ ແລະ ອຸປະກອນ

1. ໂຖແກ້ວ ຫລື ພາສຕິກປາກກວ້າງ; 2. ນ້ຳເຂົ້າໝ່າ (ເຂົ້າໜຽວດີທີ່ສຸດ); 3. ເປືອກໄຂ່ຕາກແຫ້ງ; 4. ເຈ້ຍຂາວແຜ່ນໃຫຍ່; 5. ເຊືອກຟາງ







**ອັດຕາສ່ວນ:** ນ້ຳເຂົ້າໝ່າ 10 ລິດ ຕໍ່ ເປືອກໄຂ່ຕາກແຫ້ງ 1 ກິໂລ.

### ຂັ້ນຕອນ ແລະ ວິທີການເຮັດ

1. ຕາກເປືອກໄຂ່ໃຫ້ແຫ້ງປະມານ 2-3 ແດດ
2. ໃຊ້ມືບີບເປືອກໄຂ່ໃຫ້ມຸ່ນ (ຫ້າມທຸບຈົນເປັນຜົງ)
3. ເອົານ້ຳເຂົ້າໝ່າ 10 ລິດ ໃສ່ໃນໂຖ
4. ນຳເປືອກໄຂ່ທີ່ບີບມຸ່ນລະອຽດແລ້ວໂຮຍລົງໄປໃນໂຖຢ່າງຊ້າ ໆ ຢ່າໃຫ້ເຫັນນ້ຳ.
5. ປິດປາກຖັງດ້ວຍເຈ້ຍຂາວ ມັດເຊືອກ ໝັກໄວ້ໃນບ່ອນຮົ່ມ 8-12 ມື້.
6. ຫລັງຈາກຄົບກຳນົດແລ້ວໃຫ້ກອງເອົານ້ຳໃສ່ຂວດຢາງໃນປະມານ 2/3 ຂອງຂວດ ປິດຝາໄວ້ໃນບ່ອນຮົ່ມ ແລະ ນຳໄປໃຊ້





### ອັດຕາການໃຊ້

ນ້ຳໝັກນ້ຳເຂົ້າໝ່າກັບເປືອກໄຂ່ 3 ບ່ວງແກງ ຕໍ່ ນ້ຳ 10 ລິດ.

### ຄຸນປະໂຫຍດ

1. ໃຊ້ທົດພົ້ນດອກສັດ ເລັ່ງການເຮັດວຽກຂອງຈຸລິນຊີ ແລະ ເສີມສ້າງການເຮັດວຽກຂອງເຊື້ອຣາຂາວ.
2. ປະສົມນ້ຳ ຫລື ອາຫານ ເພື່ອເພີ່ມທາດແຄລຊຽມໃນອາຫານສັດ.
3. ສີດພົ່ນໃສ່ຄອກໄກ່ຈະເຮັດໃຫ້ໄກ່ມີການປ່ຽນຂົນ ແລະ ໄຂ່ດີຂຶ້ນ.
4. ເສດເຫລືອຈາກການໝັກນຳໄປໃຫ້ສັດກິນໄດ້.

ບໍລິສັດໄຟຟ້ານ້ຳເທີນ 2 ຈຳກັດ
ພະແນກສິ່ງແວດລ້ອມ ແລະ ສັງຄົມ
ໂຄງການລຸ່ມເຂື່ອນ ແລະ ເຮືອນຈັກ, ໜ່ວຍງານຟື້ນຟູຊີວິດການເປັນຢູ່
ມີນາ 2013

## ຄຸນລັກສະນະທີ່ດີຂອງນ້ຳໝັກພືດສີຂຽວ.

- ມີກິ່ນຫອມປະສົມກັບກິ່ນຄ້າຍຄືເຫຼົ້າ..
- ກາກທີ່ເຫຼືອຈາການຕອງໃຊ້ປະສົມກັບຮຳເພື່ອເປັນອາຫານສັດ.